ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 009 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 21 ກຸມພາ 2018

ສຳນັກງານ ຄຄຊ
ເລກ 0220
ວັນທີ 22 FEB 2018
ໂທລະສັບ 021 217770

# ບົດລາຍງານ

## ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ ປະຈຳອາທິດທີ 05-09/02/2018 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

### I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ການເຄື່ອນໄຫວວຽກງານວິຊາສະເພາະ

#### 1. ສະພາບເສດຖະກິດເງິນຕາສາກົນ

#### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດແຂງຄ່າຂຶ້ນ 1,82% ທຽບໃສ່ເອີໂຣ ເນື່ອງຈາກຕົວເລກທາງດ້ານເສດຖະກິດຂອງ ສ.ອາເມລິກາ ອອກມາດີ ເປັນຕົ້ນແມ່ນປະຊາຊົນທີ່ຂໍສະຫວັດດີການຄັ້ງທຳອິດຫຼຸດລົງຈາກ 230.000 ຄົນ ໃນອາທິດຜ່ານມາ ມາເປັນ 221.000 ຄົນ ຂອງອາທິດທີ 03/02/2018 ແລະ ຕົວເລກດັດຊະນີນອກພາກການຜະລິດ ທີ່ລວມເອົາພາກການບໍລິການຂອງເດືອນ 01/2018 ເພີ່ມຂຶ້ນມາຢູ່ທີ 59,9 ຈຸດ ຈາກ 56 ຈຸດ ໃນເດືອນຜ່ານມາ[1]

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 29/01/-02/02/2018 | ອາທິດນີ້ 05-09/02/2018 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,2486 | 1,2263 | 1,82% |
| ເຢນ/ໂດລາ | 109,86 | 109,04 | 0,75% |
| ບາດ/ໂດລາ | 31,38 | 31,72 | -1,07% |
| ເປໂຊ/ໂດລາ | 51,61 | 51,55 | 0,12% |
| ຣູເປັຍ/ໂດລາ | 13.448 | 13.625 | -1,30% |
| ໂດລາສິງກະໂປ/ໂດລາ | 1,3127 | 1,3294 | -1,26% |
| ຢວນ/ໂດລາ | 6,2805 | 6,2961 | -0,25% |

[1] ແຫຼ່ງທີ່ມາຂອງຂໍ້ມູນ: https://www.dailyfx.com/calendar

1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

- ລາຄານ້ຳມັນຫຼຸດລົງ 8,12% ຈາກ 66,04 ໂດລາ/ບາເຣວ ມາເປັນ 60,68 ໂດລາ/ບາເຣວ ເນື່ອງຈາກຄັງສຳຮອງນ້ຳມັນດິບຂອງ ສ.ອາເມລິກາ ເພີ່ມຂຶ້ນ 1,90 ລ້ານບາເຣວ ຂອງອາທິດທີ 02/02/2018 ຈາກເພີ່ມຂຶ້ນ 6,78 ລ້ານບາເຣວ ໃນອາທິດຜ່ານມາ[2].

- ສຳລັບລາຄາຄຳຫຼຸດລົງ 2,19% ຈາກ 1.345,82 ໂດລາ/ອອນ ມາເປັນ 1.316,29 ໂດລາ/ອອນ ເນື່ອງຈາກການແຂງຄ່າຂຶ້ນຂອງເງິນໂດລາສະຫະລັດ ເຮັດໃຫ້ນັກລົງທຶນເທຂາຍຄຳ ແລະ ສັນຍາຊື້-ຂາຍຄຳ ແລ້ວຫັນໄປຖືຄອງເງິນໂດລາສະຫະລັດແທນ. ນອກຈາກນີ້, ກອງທຶນ SPDR[3] ຂາຍຄຳອອກຈຳນວນ 20,64 ໂຕນ, ເຮັດໃຫ້ຄຳທີ່ກອງທຶນ SPDR ຖືຄອງມີຈຳນວນ 820,71 ໂຕນ ໃນວັນທີ 09/02/2018 ຈາກ 841,35 ໂຕນ ໃນວັນທີ 05/02/2018.

2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,27% ແຕ່ແຂງຄ່າຂຶ້ນ 1,13% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າເງິນກີບແຂງຄ່າຂຶ້ນ 0,11% ທຽບໃສ່ສະກຸນເງິນໂດລາ ແຕ່ອ່ອນຄ່າລົງ 2,50% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 02/02/2018 | | | ອາທິດນີ້ 09/02/2018 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະນາຄານ[4] | | | | | | | | | | | | |
| ໂດລາ | 8.274,76 | 8.295,00 | 8.281,82 | 8.297,81 | 8.318,82 | 8.303,86 | -0,28% | -0,29% | -0,27% | 0,05% | 0,10% | 0,11% |
| ບາດ | 264,74 | 266,09 | 265,69 | 261,63 | 263,36 | 262,72 | 1,19% | 1,04% | 1,13% | -2,52% | -2,51% | -2,50% |

2.2 ສະພາບຖານເງິນຕາແລະປະລິມານເງິນ M2

- ຖານເງິນຕາປະຈຳອາທິດນີ້ຫຼຸດລົງ 0,06% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 10,29%;

- ປະລິມານເງິນ M2 ເພີ່ມຂຶ້ນ 0,22% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 11,19%.

2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (02-05/02/2018) ເຫັນວ່າ ທທກ ຊື້ໂດລາສຸດທິ 9,15 ລ້ານໂດລາ (ໃນນີ້ຊື້ໂດລາໄດ້ 34,95 ລ້ານໂດລາ ແລະ ຂາຍໂດລາໄດ້ 25,80 ລ້ານໂດລາ) ແຕ່ຂາຍເງິນບາດສຸດທິ 499,94 ລ້ານບາດ (ໃນນີ້ຊື້ບາດໄດ້ 244,97 ລ້ານບາດ ແລະ ຂາຍບາດໄດ້ 744,91 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາ ເຫັນວ່າເງິນໂດລາຫຼຸດລົງ 6,85% ແຕ່ເງິນບາດເພີ່ມຂຶ້ນ 2,86%.

- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຊື້ເງິນໂດລາຈາກທະນາຄານທຸລະກິດຈຳນວນ 2 ລ້ານໂດລາ ແຕ່ເງິນບາດ ບໍ່ມີການຊື້-ຂາຍ;

- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈຳນວນ 14,39 ລ້ານໂດລາສະຫະລັດ ແລະ ເງິນບາດ ຈຳນວນ 76,20 ລ້ານ;

---

[2] ແຫຼ່ງທີ່ມາຂອງຂໍ້ມູນ: https://www.dailyfx.com/calendar

[3] ກອງທຶນ SPDR ເປັນກອງທຶນຊື້-ຂາຍຄຳແຫ່ງ ທີ່ໃຫຍ່ທີ່ສຸດໃນໂລກ

1% ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ

- ການຊື້-ຂາຍລະຫວ່າງ ທຫລ ກັບພາກສ່ວນອື່ນໆ ໃນອາທິດນີ້ເຫັນວ່າບໍ່ມີການຊື້-ຂາຍເງິນໂດລາ ແຕ່ຊື້ເງິນບາດ ຈຳນວນ 200 ລ້ານບາດ.

ສະພາບການຊື້-ຂາຍເງິນຕາຕ່າງປະເທດ (ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 26/01-01/02/2018 | | ອາທິດນີ້ 02-05/02/2018 | | (%) +ເພີ່ມຂຶ້ນ/-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **41,20** | **287,91** | **34,95** | **244,97** | **-15,17%** | **-14,91%** |
| - ທ/ຄທຸລະກິດລັດ | 17,08 | 127,96 | 12,71 | 149,69 | -25,59% | 16,98% |
| - ທ/ຄທຸລະກິດອື່ນໆ | 24,12 | 159,95 | 22,24 | 95,28 | -7,79% | -40,43% |
| **2. ການຂາຍເງິນຕາຕ່າງປະເທດ** | **24,02** | **674,44** | **25,80** | **744,91** | **7,41%** | **10,45%** |
| - ທ/ຄທຸລະກິດລັດ | 11,40 | 142,23 | 13,94 | 199,10 | 22,28% | 39,98% |
| - ທ/ຄທຸລະກິດອື່ນໆ | 12,62 | 532,21 | 11,86 | 545,81 | -6,02% | 2,56% |
| **ຊື້-ຂາຍສຸດທິທທກ** | **17,18** | **-386,53** | **9,15** | **-499,94** | **-46,74%** | **29,34%** |
| - ຜິດດ່ຽງຊື້-ຂາຍ | 41,70% | -134,25% | 26,18% | -204,08% | -37,22% | 52,01% |
| **- ມູນຄ່າການຊື້-ຂາຍ** | **65,22** | **962,35** | **60,75** | **989,88** | **-6,85%** | **2,86%** |
| **3.ການຊື້-ຂາຍລະຫວ່າງທຫລກັບ ທທກ** | **10,39** | **0,00** | **2,00** | **0,00** | | |
| - ທຫລຊື້ຈາກທທກ | 10,40 | 0,00 | 2,00 | 0,00 | | |
| - ທຫລຂາຍໃຫ້ທທກ | 0,01 | 0,00 | 0,00 | 0,00 | | |
| **4.ຊື້-ຂາຍລະຫວ່າງທທກດ້ວຍກັນ** | **10,39** | **0,00** | **14,39** | **76,20** | | |
| **5.ທຫລກັບ ພາກສ່ວນອື່ນໆ** | **0,00** | **0,00** | **0,00** | **0,00** | | |
| -ທຫລຊື້ຈາກພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |
| -ທຫລຂາຍໃຫ້ພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |

**2.4 ສະພາບອັດຕາເງິນເຟີ້**

ອັດຕາເງິນເຟີ້ໃນເດືອນ 02/2018 ຄາດວ່າຈະຢູ່ໃນລະດັບ 0,99% (ຕົວເລກຄາດຄະເນ).

**2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ**

ທະນາຄານແຫ່ງ ສປປ ລາວ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເຂົ້າເງິນຕາຕ່າງປະເທດໃນອາທິດນີ້ເພີ່ມຂຶ້ນ 1.873,9% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 50,47 ລ້ານໂດລາສະຫະລັດທຽບເທົ່າ. ໃນນັ້ນ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ເພີ່ມຂຶ້ນ 59,9% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 68,56 ລ້ານໂດລາສະຫະລັດທຽບເທົ່າ.

**3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ**

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ຈຳນວນ 611 ສະບັບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 441 ສະບັບ ເທົ່າກັບ 41,92% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 285,44 ຕື້ກີບ ທຽບໃສ່ອາທິດຜ່ານມາຫຼຸດລົງ 150,05 ຕື້ກີບ ເທົ່າກັບ 34,45% ເມື່ອທຽບໃສ່ອາທິດຜ່ານມາ;

ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (02-08/02/2018) ມີທັງໝົດ 3.697 ຄັ້ງ ເຊິ່ງປະກອບມີດັ່ງນີ້:

- **ສະກຸນເງິນກີບ:** ມີການເຄື່ອນໄຫວຈຳນວນ 3.623 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເພີ່ມຂຶ້ນ ຈຳນວນ 155,30 ຕື້ກີບ ຈາກ 980,67 ຕື້ກີບ ມາເປັນ 1.135,97 ຕື້ກີບ ເທົ່າກັບ 15,83%;
- **ກະຊວງການເງິນ:** ມີການເຄື່ອນໄຫວຈຳນວນ 74 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າເພີ່ມຂຶ້ນຈຳນວນ 156,84 ຕື້ກີບ ຈາກ 43,62 ຕື້ກີບ ມາເປັນ 200,46 ຕື້ກີບ ເທົ່າກັບ 359,56%.

4. <u>ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ.</u>

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ປິດຢູ່ທີ່ 970,06 ຈຸດ ເພີ່ມຂຶ້ນ ຈາກ 952,98 ຈຸດ ຫຼື ເທົ່າກັບ 1,79% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 274.800 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,44 ຕື້ກີບ ຫຼຸດລົງ 72,75% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 29,25% ຂອງມູນຄ່າການ ຊື້-ຂາຍທັງໝົດ.

➢ <u>ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)</u> (ຫົວໜ່ວຍມູນຄ່າ 1.000ກີບ)

| | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| ລາຍຊື່ | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) |
| ທະນາຄານການຄ້າຕ່າງປະເທດລາວມະຫາຊົນ | 190.800 | 1.097.590.000 | 5.753 | **199.700** | **1.142.040.000** | **5.719** | 4,66 | 4,05 | -34 |
| ບໍລິສັດຜະລິດໄຟຟ້າລາວມະຫາຊົນ | 923.300 | 4.200.800.000 | 4.550 | **64.900** | **286.060.000** | **4.408** | -92,97 | -93,19 | -142 |
| ບໍລິສັດລາວເວີນມະຫາຊົນ | - | - | 5.500 | **100** | **600.000** | **6.000** | - | - | 500 |
| ບໍລິສັດປີໂຕລ້ຽມເທລດດິ້ງລາວມະຫາຊົນ | 600 | 1.150.000 | 1.917 | **100** | **210.000** | **2.100** | -83,33 | -81,74 | 183 |
| ບໍລິສັດສຸວັນນີໂຮມເຊັນເຕີມະຫາຊົນ | - | - | 2.950 | **-** | **-** | **2.950** | - | - | - |
| ບໍລິສັດພູສີກໍ່ສ້າງມະຫາຊົນ | 100 | 160.000 | 1.600 | **10.000** | **15.000.000** | **1.500** | 9.900,00 | 9.275,00 | -100 |
| ທັງໝົດ | 1.114.800 | 5.299.700.000 | | **274.800** | **1.443.910.000** | | -75,35 | -72,75 | |

3. <u>ວຽກງານອື່ນໆທີ່ພົ້ນເດັ່ນ.</u>

- ສຳເລັດການເຂົ້າຮ່ວມກອງປະຊຸມ, ຈັດກອງປະຊຸມ ແລະ ພິທີຕ່າງໆ: ❶ ກອງປະຊຸມຄະນະສະເພາະກິດຂອງລັດຖະບານ ໃນການແກ້ໄຂບັນຫາ ບໍລິສັດ ພີເອັສ ສົ່ງເສີມກະສິກຳ ແລະ ອຸດສາຫະກຳ ຄົບວົງຈອນ ຂາອອກ-ຂາເຂົ້າ ທີ່ (ທຫລ), ❷ ກອງປະຊຸມລັດຖະບານສະໄໝສາມັນ ປະຈຳເດືອນ ກຸມພາ 2018 ທີ່ (ຫ້ອງວ່າການສຳນັກງານນາຍົກ), ❸ ກອງປະຊຸມວຽກງານກວດສອບງົບປະມານແຫ່ງລັດ ປະຈຳປີ 2017 ທີ່ (ໂຮງແຮມດອນຈັນພາເລດ), ❹ ກອງປະຊຸມສ່ອງແສງວຽກງານສາຍພັກ-ລັດ ປະຈຳເດືອນ ມັງກອນ 2018 ທີ່ (ທຫລ), ❺ ກອງປະຊຸມປຶກສາຫາລືກ່ຽວກັບການຈັດຕັ້ງປະຕິບັດການອວ່າຍໜີ້ 3 ແຈ ໂຄງການລົງທຶນຂອງລັດ ທີ່ (ທຫລ), ❻ ກອງປະຊຸມປຶກສາຫາລືກ່ຽວກັບລັດຖະບານ ສ. ອາເມລິກາ ປະກາດຂຶ້ນບັນຊີດຳ ບັນດານັກທຸລະກິດ ຢູ່ເຂດເສດຖະກິດພິເສດ ສາມຫຼ່ຽມທອງຄຳ ທີ່ (ກະຊວງການຕ່າງປະເທດ), ❼ ກອງປະຊຸມປຶກສາຫາລືຂອງຄະນະຮັບຜິດຊອບກະກຽມເບື້ອງໃນການສະເຫຼີມສະຫຼອງວັນສ້າງຕັ້ງ ທຫລ ຄົບຮອບ 50 ປີ ທີ່ (ທຫລ), ❽ ກອງປະຊຸມຄົ້ນຄວ້າປັບປຸງຮ່າງກົດໝາຍວ່າດ້ວຍ ທຫລ ທີ່ (ທຫລ), ❾ ກອງປະຊຸມໃນຫົວຂໍ້: "ວຽກເຊື່ອມໂຍງຂະແໜງການເງິນອາຊຽນ" ທີ່ (ປະເທດສິງກະໂປ), ❿ ຈັດຕັ້ງພິທີປະກາດການຈັດຕັ້ງສະພາບໍລິຫານ ທພລ ຊຸດໃໝ່ ທີ່ (ທະນາຄານພັດທະນາລາວ);
- ຕ້ອນຮັບການເຂົ້າຢ້ຽມຢາມຂໍ່ານັບທ່ານ ຜູ້ວ່າການ ທຫລ ຈາກຄະນະວິຊາການຈາກຫ້ອງການ AMRO.

**III.ແຜນວຽກຈຸດສຸມອາທິດຕໍ່ໄປ:**

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດນະໂຍບາຍອັດຕາດອກເບ້ຍຂອງ ທຫລ ແລະ ການສ້າງໂປຼແກຼມຕິດຕາມນະໂຍບາຍດັ່ງກ່າວຢ່າງໃກ້ຊິດ;
- ສືບຕໍ່ຕິດຕາມ, ກວດກາ ແລະ ສັງລວມການຮັກສາລະດັບຖານະເງິນຕາຕ່າງປະເທດຂອງທະນາຄານທຸລະກິດທົ່ວລະບົບ;
- ສືບຕໍ່ຄົ້ນຄວ້າຜະລິດຕະພັນໃໝ່ຂອງ ທະນາຄານກະສິກອນໄທ, ທະນາຄານພົງສະຫວັນ ກ່ຽວກັບການຊຳລະທາງອີເລັກໂທນິກ ແລະ ຜະລິດຕະພັນບັດ UnionPlay ຂອງທະນາຄານລາວ-ຈີນ;
- ກະກຽມຈັດກອງປະຊຸມ ແລະ ເຂົ້າຮ່ວມກອງປະຊຸມ: ❶ ກອງປະຊຸມສ້າງນິຕິກຳເພື່ອຜັນຂະຫຍາຍດຳລັດວ່າດ້ວຍມາດຕະຖານພັດທະນາ ທີ່ (ທຫລ), ❷ ກອງປະຊຸມປຶກສາຫາລືກ່ຽວກັບ ວຽກງານການໂອນເງິນຂ້າມທະນາຄານດ້ວຍຕູ້ ATM ກັບບັນດາສະມະຊິກ LAPS ແລະ ❸ ກອງປະຊຸມທ່ານ ນາຍົກ-ຮອງນາຍົກລັດຖະມົນຕີ ປະຈຳເດືອນກຸມພາ 2018 ທີ່ (ຫ້ອງການສຳນັກງານນາຍົກ);
- ກະກຽມເຜີຍແຜ່ເອກະສານສຳຄັນ ທີ່ (ທຫລ) ດັ່ງນີ້: ❶ ແຈ້ງການສະບັບເລກທີ 2090/ຫສນຍ, ກຄສ; ❷ ຖະແຫຼງການຮ່ວມລະຫວ່າງ ສປປ ລາວ ແລະ ສປ. ຈີນ; ❸ ບົດບັນທຶກຄວາມເຂົ້າໃຈລະຫວ່າງທະນາຄານແຫ່ງ ສປປ ລາວ ແລະ ທະນາຄານພັດທະນາແຫ່ງປະເທດຈີນ (MOU); ❹ ມະຕິຕົກລົງຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 076/ສພຊ ແລະ 075/ສພຊ ແລະ ❺ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 397/ນຍ;
- ກະກຽມຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຄະນະຜູ້ວ່າການ ທຫລ ຈາກ: ❶ ປະທານ ແລະ ຜູ້ບໍລິຫານຂັ້ນສູງຂອງທະນາຄານ Standard Chartered ປະຈຳປະເທດໄທ ແລະ ❷ ຄະນະທ່ານທູດຝຣັ່ງ ປະຈຳລາວ ເພື່ອປຶກສາຫາລືວຽກ AML/CFT.

ຫົວໜ້າຫ້ອງການ

ເພັດສະຖາພອນ ແກ້ວວົງວິຈິດ